# ການຄຸ້ມຄອງ LPS

**(LPS Conservatorship)**

# ກົດບັນຍັດ Lanterman-Petris-Short (LPS)

**Welf. & Inst. Code Sections 5350 et seq.**

Note: When this publication was originally published, we were known as Protection & Advocacy, Inc. (PAI). In October 2008, we changed our name from PAI to Disability Rights California.

## LPS Conservatorship (ການ ຄຸ້ມຄອງ LPS) ຄືຫຍັງ?

LPS Conservatorship ກໍ່ຄືເມື່ອ ຜູ້ພິພາກສາແຕ່ງຕັ້ງບຸກຄົນໃດນຶ່ງເປັນຜູ້ຕັດສິນໃຈ ແທນທ່ານ. ບຸກຄົນນີ້ຖືກເອີ້ນວ່າ ຜູ້ຄຸ້ມຄອງ.

## ຂ້າພະເຈົ້າມີສິດທີ່ຈະຢູ່ບ່ອນໃດ ຖ້າວ່າ ຕົກຢູ່ໃນ ການຄຸ້ມຄອງ LPS?

- ຜູ້ຄຸ້ມຄອງ LPS ມີໜ້າທີ່ຈັດໃຫ້ທ່ານຢູ່ໃນ ສະຖານທີ່ທີ່ເໝາະສົມຕໍ່ຄວາມຕ້ອງການຂອງທ່ານ.
- ຜູ້ຄຸ້ມຄອງຕ້ອງໄດ້ຮັບການສະໜັບສະໜູນ ເພື່ອ ຊ່ວຍໃຫ້ທ່ານສາມາດອາໄສຢູ່ໃນສະຖານທີ່ຂອງຕົນເອງ ຫລືຢູ່ບ້ານຂອງເພື່ອນ ຫລືຂອງສະມາຊິກໃນຄອບຄົວໄດ້.
- ທ່ານມີສິດຢູ່ໃກ້ຄອບຄົວ, ໝູ່ເພື່ອນ ແລະຊຸມຊົນ ໃນເຂດຂອງທ່ານ.
- ທ່ານມີສິດທີ່ຈະຢູ່ໃນບ່ອນທີ່ທ່ານຈະໄດ້ຮຽນຮູ້ ຄວາມຊຳນານໃນການຢູ່ແບບເປັນອິດສະຫລະ ຫລາຍຂຶ້ນ.

## ຂ້າພະເຈົ້າຈະຖືກຈັດຢູ່ພາຍໃຕ້ການຄຸ້ມຄອງ LPS ເມື່ອໃດ?

ທ່ານອາດຖືກຈັດໃຫ້ຢູ່ໃນການຄຸ້ມຄອງ LPS ໄດ້ ຖ້າວ່າ ຜູ້ພິພາກສາຕັດສິນວ່າທ່ານ "ພິການຢ່າງຮຸນແຮງ." ອັນນີ້ໝາຍຄວາມວ່າ ທ່ານພິການທາງ ຈິດຊຶ່ງພາໃຫ້ທ່ານບໍ່ສາມາດຫາອາຫານ, ເຄື່ອງນຸ່ງ ແລະບ່ອນຢູ່ໃຫ້ຕົນເອງໄດ້.

## ການພິການທາງຈິດ ຄືຫຍັງ?

ກົດບັນຍັດ LPS ອ້າງອີງວ່າໝາຍເຖິງ "ການ ບົກພ່ອງທາງຈິດ." ມັນຖືກຕີຄວາມໝາຍໄວ້ແບບ ກວ້າງໆ ເພື່ອໃຫ້ຄອບຄຸມເຖິງບຸກຄົນຕ່າງໆ ທີ່ຖືກບົ່ງມະຕິພະຍາດວ່າເປັນພະຍາດຄວາມຈຳເສື່ອມ (Alzheimer's), ບາດເຈັບທາງສະໝອງ ຫລືມີອະໄວຍະວະບົກພ່ອງ. ແຕ່ບໍ່ໄດ້ລວມສະເພາະ ການບົ່ງມະຕິພະຍາດການເປັນບັນຍາອ່ອນ.

## ຜູ້ພິພາກສາຈະຕັດສິນໄດ້ຈັ່ງໃດວ່າ ຂ້າພະເຈົ້າ ຈຳເປັນຕ້ອງມີຜູ້ຄຸ້ມຄອງ ຫລືບໍ່?

- ຜູ້ພິພາກສາຈະທົບທວນເບິ່ງຄຳຮ້ອງ ຊຶ່ງຖືກຍື່ນ ໂດຍຜູ້ສອບສວນຂອງຄາວຕີ້ທີ່ດູແລເລື້ອງການຄຸ້ມຄອງ.
- ຕ້ອງມີຈິດແພດສອງຄົນສະໜັບສະໜູນ.
- ທ່ານຕ້ອງໄດ້ຮັບສຳເນົາຂອງໃບຄຳຮ້ອງແລະ ໄດ້ຮັບການບອກກ່າວວ່າ ເມື່ອໃດຜູ້ພິພາກສາ ຈະຈັດໃຫ້ມີການພິຈາລະນາເລື້ອງຢູ່ທີ່ສານ.

## ຂ້າພະເຈົ້າມີສິດຫຍັງແດ່ ໃນການຄັດຄ້ານ ເລື້ອງ?

- ທ່ານມີສິດຈ້າງທະນາຍຄວາມ ຫລືຂໍເອົາ ທະນາຍຄວາມສາທາລະນະໄດ້ໂດຍບໍ່ເສຍຄ່າ.
- ທ່ານມີສິດຂໍເອົາການໄຕ່ສວນຄະດີໂດຍລູກຂຸນ.
- ຄາວຕີ້ຕ້ອງສະແດງໃຫ້ເຫັນເຖິງຄວາມຈຳເປັນ ດ້ວຍ "ຫລັກຖານພິສູດໂດຍບໍ່ມີຂໍ້ສົງໃສ."

- ທ່ານມີສິດເຂົ້າຮ່ວມໃນການພິຈາລະນາຄະດີ ແລະໃຫ້ການຢັ້ງຢືນ ຫລືໃຫ້ຄອບຄົວ ຫລືເພື່ອນເປັນຜູ້ໃຫ້ການແທນທ່ານໄດ້.
- ທ່ານມີສິດເບິ່ງໝາຍເກາະ ແລະຫລັກຖານຕ່າງໆ ແລະຂໍເອົາຂໍ້ມູນຕ່າງໆ ທີ່ຄົ້ນພົບໄດ້.
- ທ່ານມີສິດຮຽກຮ້ອງເອົາການປະເມີ ນໂດຍຈິດແພດ ຈາກພາຍນ ອກກ່ຽວກັບຄວາມຈຳເປັນທີ່ຕ້ອງ ມີການຄຸ້ມຄອງໄດ້.



## ຂ້າພະເຈົ້າຄວນຕຽມຕົວຂຶ້ນສານຈັ່ງໃດ?

- ແຕ່ງຕົວໃຫ້ຮຽບຮ້ອຍຫລາຍທີ່ສຸດ.
- ຢູ່ໃນຄວາມສະຫງົບ, ເຖິງແມ່ນວ່າ ທ່ານຈະ ບໍ່ເຫັນດີນຳຄົນອື່ນໆ ທີ່ເວົ້າເຖິງທ່ານກໍ່ຕາມ.
- ຮັບຮູ້ວ່າທ່ານໝໍເວົ້າວ່າ ທ່ານມີສະພາບເງື່ອນໄຂ ທາງຈິດ.
- ຖ້າວ່າ ທ່ານບໍ່ເຫັນດີນຳການບົ່ງມະຕິພະຍາດຂອງທ່ານໝໍ, ໃຫ້ທ່ານອະທິບາຍເຫດຜົນ.
- ຮັບຮູ້ວ່າ ທ່ານໝໍແນະນຳການໃຊ້ຢາ.
- ຖ້າວ່າ ທ່ານບໍ່ເຫັນດີນຳການແນະນຳຂອງທ່ານໝໍ, ໃຫ້ອະທິບາຍເຫດຜົນ.
- ຕຽມເຮັດແຜນສຳລັບຕົນເອງ ເພື່ອສະແດງໃຫ້ ເຫັນວ່າ ທ່ານສາມາດຈັດຫາອາຫານ, ເຄື່ອງນຸ່ງ ແລະບ່ອນຢູ່ອາໄສໃຫ້ຕົນເອງໄດ້.
- ຊອກເອົາຄຳກ່າວທີ່ເປັນລາຍລັກອັກສອນ ຫລື ຫລັກຖານກ່ຽວກັບການຊ່ວຍເຫລືອຈາກ ຝ່າຍທີສາມ, ຖ້າວ່າຈຳເປັນ.

## ການຊ່ວຍເຫລືອຈາກຝ່າຍທີສາມ ຄືຫຍັງ?

ການຊ່ວຍເຫລືອຈາກຝ່າຍທີສາມ ກໍ່ຄືການຊ່ວຍເຫລືອ ຈາກສະມາຊິກຄອບຄົວ, ເພື່ອນ ຫລືໜ່ວຍງານ ຊ່ວຍເຫລືອໃນຊຸມຊົນ ເພື່ອໃຫ້ໝັ້ນໃຈວ່າ ທ່ານຈະ ມີອາຫານ, ເຄື່ອງນຸ່ງ ແລະບ່ອນຢູ່ອາໄສ. ຕົວຢ່າງລວມມີ:

- ແມ່ຂອງທ່ານຈະຊ່ວຍທ່ານຈັດການເລື່ອງຜົນປະໂຫຍດ SSI.
- ເພື່ອນສະໜິດຂອງທ່ານຈະມາຢ້ຽມຢາມທ່ານທຸກມື້ ຫລືມາຢູ່ນຳທ່ານ.
- ພະນັກງານສັງຄົມສົງເຄາະຂອງຄາວຕີ້ຈະຊ່ວຍ ທ່ານຊອກຫາເຮືອນແລະຮັກສາມັນໄວ້.
  - ນາງພະຍາບານຈະໄປຢ້ຽມຢາມທີ່ອາພາດເມັນ ຂອງທ່ານເພື່ອຕິດຕາມກວດເບິ່ງເລື່ອງການກິນຢາ ແລະສຸຂະພາບຮ່າງກາຍຂອງທ່ານ.
  - ພະນັກງານຊ່ວຍເຫລືອໃນເຮືອນຈະຊ່ວຍຕຽມ ອາຫານໃຫ້ທ່ານ.
  - ນັກຊ່ຽວຊານດ້ານການຟື້ນຟູສຸຂະພາບຈິດ ປະຈຳຄາວຕີ້ຈະຊ່ວຍໃຫ້ທ່ານໄດ້ຮຽນຮູ້ການຕຽມ ອາຫານໃຫ້ແກ່ຕົນເອງທຸກມື້.

## ໃຜສາມາດເປັນຜູ້ຄຸ້ມຄອງຂອງຂ້າພະເຈົ້າໄດ້?

  - ທ່ານອາດຈະສະເໜີບຸກຄົນໃດກໍ່ໄດ້ທີ່ທ່ານປາກໃຫ້ ເປັນຜູ້ຄຸ້ມຄອງຂອງທ່ານ.
- ຕາມກົດໝາຍຈະມີລາຍຊື່ຂອງບຸກຄົນທີ່ມີສິດທິ ພິເສດກ່ອນ ໂດຍເລີ້ມຈາກສະມາຊິກໃນຄອບຄົວ.
- ຜູ້ພິພາກສາຈະຕັດສິນວ່າໃຜຈະຖືກແຕ່ງຕັ້ງ.
- ຜູ້ດູແລສາທາລະນະຂອງຄາວຕີ້ອາດຖືກແຕ່ງຕັ້ງ ຖ້າວ່າບໍ່ມີຜູ້ຫວ່າງ.

## ການຄຸ້ມຄອງ LPS ມີລະຍະເວລາດົນ ປານໃດ?

ການຄຸ້ມຄອງ LPS ສາມາດມີລະຍະດົນນານສູງສຸດໜຶ່ງປີ. ອາດມີການຕໍ່ອາຍຸການຄຸ້ມຄອງໃໝ່ໃນສານເມື່ອຮອດສິ້ນປີ.

## ການຄຸ້ມຄອງ LPS ຊົ່ວຄາວ ຄືຫຍັງ?

LPS ຊົ່ວຄາວ ກໍ່ຄືເມື່ອຜູ້ພິພາກສາແຕ່ງຕັ້ງໃຜຜູ້ນຶ່ງ ໃຫ້ຕັດສິນໃຈແທນທ່ານເປັນເວລາດົນເຖິງ 30 ວັນ. ສະເພາະຜູ້ສືບສວນເລື່ອງການຄຸ້ມຄອງປະຈຳຄາວຕີ້ ເທົ່ານັ້ນຈຶ່ງຈະຍື່ນຄຳຮ້ອງເຮັດແນວນີ້ໄດ້. ທຳມະດາ ແລ້ວ, ການເຮັດແນວນີ້ເພື່ອໃຫ້ທ່ານຢູ່ໃນໂຮງໝໍໄດ້ ໃນເວລານັ້ນ. ແຕ່ທ່ານກໍ່ມີສິດໃນເລື່ອງການຈັດທ່ານ ເຂົ້າຢູ່ໃນສະຖານທີ່ໃດນຶ່ງ ຊຶ່ງຢ່າງໜ້ອຍທ່ານຕ້ອງໄດ້ຢູ່ໃນທີ່ທີ່ມີການຈຳກັດໜ້ອຍທີ່ສຸດ ແລະມີຄວາມ ເໝາະສົມ. ທ່ານຍັງມີສິດທີ່ຈະໄດ້ຮັບແຈ້ງການ ທີ່ເປັນລາຍລັກອັກສອນຢ່າງໜ້ອຍຫ້າ (5) ວັນກ່ອນ ທີ່ຈະມີການຈັດການຄຸ້ມຄອງແບບຊົ່ວຄາວ. ທ່ານ ສາມາດຮຽກຮ້ອງໃຫ້ມີການພິຈາລະນາຄະດີ ເພື່ອຂໍ ລັດຄ້ານໄດ້.

## ຂ້າພະເຈົ້າມີສິດຫຍັງແດ່ ຖ້າວ່າຂ້າພະເຈົ້າຖືກຈັດຢູ່ພາຍໃຕ້ການຄຸ້ມຄອງ LPS?

- ທ່ານມີສິດທີ່ຈະໄດ້ຮັບການບໍລິການຕ່າງໆ ແລະການອຸ້ມຊູເພື່ອບໍ່ຈຳເປັນຕ້ອງນຳໃຊ້ ການຄຸ້ມຄອງ.
- ທ່ານມີສິດທີ່ຈະໃສ່ເຄື່ອງນຸ່ງຂອງທ່ານເອງ, ໂທລະສັບສ່ວນຕົວ, ໄດ້ຮັບຈົດໝາຍສ່ວນຕົວ, ຮັບຜູ້ມາຢ້ຽມຢາມ, ມີເງິນໃຊ້ສ່ວນຕົວໃນຈຳນວນທີ່ເໝາະສົມ ແລະສິດທິອື່ນໆ.
- ທ່ານມີສິດປະກອບສ່ວນໃນການປິ່ນປົວ ແລະການຕັດສິນໃຈເລື້ອງການຈັດບ່ອນຢູ່.
- ທ່ານມີສິດທີ້ຂົ້ມພື້ນຖານໃນການຕັດສິນໃຈກ່ຽວກັບຮ່າງກາຍຂອງທ່ານ.
- ໃນສ່ວນຂອງການຕັດສິນໃຈດ້ວຍຕົນເອງນັ້ນ, ຈະຕ້ອງມີການຂໍເອົາການຍິນຍອມສຳລັບການ ປິ່ນປົວພິເສດ.
- ທ່ານຈະຖືກສັນນິຖານວ່າ ມີຄວາມສາມາດໃນການໃຫ້ຄຳຍິນຍອມ. ອາດມີການໃຊ້ເຄື່ອງມືສື່ສານອື່ນທີ່ຈຳເປັນເພື່ອຊ່ວຍເຫລືອທ່ານ.
- ທ່ານສາມາດຕັດສິນໃຈໄດ້ ເວັ້ນແຕ່ວ່າ ທ່ານຖືກພົບວ່າຂາດຄວາມສາມາດທີ່ຈະເຮັດແນວນັ້ນໄດ້.

## ໃຜເປັນຜູ້ຕັດສິນວ່າ ຂ້າພະເຈົ້າມີຄວາມສາມາດໃນການຕັດສິນໃຈເລື້ອງການປິ່ນປົວດ້ວຍຕົນເອງ ຫລືບໍ່?

ຜູ້ພິພາກສາຈະຕັດສິນວ່າ ທ່ານບໍ່ມີສິດທິຫຍັງແດ່. ການຕັດສິນນີ້ແມ່ນອີງຕາມການລາຍງານຂອງຜູ້ສອບສວນເລື້ອງການຄຸ້ມຄອງປະຈຳຄາວຕີ້. ໃນລາຍງານອາດແນະນຳວ່າໃຫ້ຖອນສິດທິດັ່ງຕໍ່ໄປນີ້ອອກຈາກທ່ານ:

- ສິດທິໃນການອອກສຽງເລືອກຕັ້ງ,
- ສິດທິໃນການເຮັດສັນຍາ,
- ສິດທິໃນການຂັບຣົຖ,
- ສິດທິໃນການມີອາວຸດໃນຄອບຄອງ,
- ສິດທິໃນການຕັດສິນໃຈເລື້ອງການປິ່ນປົວທີ່ກ່ຽວກັບສະພາບທາງຈິດຂອງທ່ານ, ແລະ
- ສິດທິໃນການຕັດສິນໃຈເລື້ອງການປິ່ນປົວອື່ນໆ.

## ຜູ້ພິພາກສາຈະຕັດສິນຈັ່ງໃດວ່າ ຂ້າພະເຈົ້າຈະບໍ່ມີສິດໃນເລື້ອງໃດແດ່?

ການທີ່ຜູ້ພິພາກສາຕັດສິນວ່າ ສິດທິຫຍັງແດ່ທີ່ຕ້ອງຖອນອອກຈາກທ່ານນັ້ນແມ່ນອີງຕາມຂໍ້ແທ້ຈິງກ່ຽວກັບຄວາມສາມາດຂອງທ່ານໃນການໃຊ້ສິດທິສະເພາະແຕ່ລະອັນ. ຍົກຕົວຢ່າງ:

- ທ່ານຄວນຮັກສາສິດທິໃນການເລືອກຕັ້ງຂອງທ່ານໄວ້ ຖ້າວ່າທ່ານເຂົ້າໃຈເລື້ອງການລົງທະບຽນເລືອກຕັ້ງ.
- ທ່ານຄວນຮັກສາສິດທິໃນການຕັດສິນໃຈເລື້ອງການປິ່ນປົວໄວ້ ຖ້າວ່າທ່ານເຂົ້າໃຈເຖິງຜົນດີ ແລະຜົນສ່ຽງຂອງການປິ່ນປົວທີ່ແນະນຳໃຫ້ທ່ານ ແລະທ່ານສາມາດສະແດງຄວາມຕ້ອງການສຳລັບທາງເລືອກໃນການປິ່ນປົວທີ່ເໝາະສົມໄດ້.

## ຜູ້ຄຸ້ມຄອງເຮັດຫຍັງແດ່?

- ຜູ້ຄຸ້ມຄອງມີໜ້າທີ່ຊອກຫາບ່ອນຢູ່ທີ່ເໝາະສົມໃຫ້ທ່ານໄດ້ຢູ່ອາໄສ.



- ຜູ້ຄຸ້ມຄອງມີໜ້າທີ່ຊ່ວຍເຫລືອທ່ານເລື້ອງອາຫານ, ເຄື່ອງນຸ່ງ, ການດູແລສຸຂະພາບ ແລະບ່ອນຢູ່ອາໄສ.
- ຜູ້ຄຸ້ມຄອງມີໜ້າທີ່ຊ່ວຍເຫລືອໃຫ້ທ່ານໄດ້ຮັບ ບໍລິການເພື່ອສິ່ງເສີມໃຫ້ທ່ານສາມາດຢູ່ໄດ້ຢ່າງມີອິດສະຫລະຫລາຍຂື້ນ.
- ສານອາດໃຫ້ອຳນາດແກ່ຜູ້ຄຸ້ມຄອງໃນການ ບໍລິຫານແລະຈັດການເລື້ອງຊັບສົມບັດຂອງທ່ານ. ອັນນີ້ເອີ້ນວ່າ "ຜູ້ຄຸ້ມຄອງຊັບສິນ" [ໃຫ້ເບິ່ງເອກະສານ PAI Probate Conservatorship).
- ໜັງສືການຄຸ້ມຄອງຈະບອກກ່ຽວກັບໜ້າທີ່ຮັບຜິດຊອບຂອງຜູ້ຄຸ້ມຄອງຂອງທ່ານ, ແລະສິດທິຕ່າງໆທາງກົດໝາຍທີ່ຕ້ອງຖອນອອກຈາກທ່ານ.

## ຂ້າພະເຈົ້າມີສິດທິຫຍັງແດ່ ຖ້າວ່າສານ ຕັດສິນວ່າ ຂ້າພະເຈົ້າບໍ່ມີຄວາມສາມາດ ໃນການຕັດສິນໃຈເລື້ອງການປິ່ນປົວ?

ຜູ້ຄຸ້ມຄອງມີໜ້າທີ່ຕັດສິນໃຈໂດຍອີງໃສ່ຄວາມປາດຖະໜາຂອງທ່ານ. ອັນນີ້ໝາຍຄວາມວ່າ ທ່ານມີສິດປະກອບສ່ວນໃນການຕັດສິນໃຈເລື້ອງການປິ່ນປົວທັງໝົດ. ຜູ້ຄຸ້ມຄອງຄວນຍິນຍອມໃນສິ່ງທີ່ທ່ານຕ້ອງການ ເວັ້ນແຕ່ວ່າສິ່ງທີ່ທ່ານຕ້ອງການນັ້ນບໍ່ມີຄວາມເໝາະສົມທາງການແພດ.

## ຂ້າພະເຈົ້າຈະເຮັດຈັ່ງໃດ ຖ້າວ່າ ຂ້າພະເຈົ້າບໍ່ເຫັນດີນຳຜູ້ຄຸ້ມຄອງຂອງຂ້າພະເຈົ້າ?

ທ່ານສາມາດຮຽກຮ້ອງໃຫ້ສານພິຈາລະນາຄະດີໄດ້ ຖ້າວ່າ ທ່ານຮູ້ສຶກວ່າຜູ້ຄຸ້ມຄອງຂອງທ່ານໃຊ້ອຳນາດຫລາຍເກີນໄປຕໍ່ຊີວິດຂອງທ່ານ ຫລືຈັດໃຫ້ທ່ານຢູ່ໃນບ່ອນທີ່ມີການຈຳກັດຫລາຍເກີນໄປ.

- ທ່ານສາມາດຮ້ອງຂໍເອົາ (ການພິຈາລະນາຄະດີຄືນໃໝ່) ກ່ຽວກັບສິດທິທີ່ຖອນຄືນຈາກທ່ານ ແລະເອົາໃຫ້ຜູ້ຄຸ້ມຄອງຂອງທ່ານ.
- ທ່ານສາມາດຮ້ອງຂໍເອົາ (ການພິຈາລະນາຄະດີທົບທວນເລື້ອງການຈັດບ່ອນຢູ່) ເພື່ອຂໍຍ້າຍໄປຢູ່ບ່ອນທີ່ມີການຈຳກັດໜ້ອຍລົງ, ແລະມີຄວາມເໝາະສົມຫລາຍຂຶ້ນ.
- ການພິຈາລະນາຄະດີຄືນໃໝ່ອາດຮຽກຮ້ອງໃຫ້ມີຍາມໃດກໍໄດ້ ຫລັງຈາກມີການແຕ່ງຕັ້ງຜູ້ຄຸ້ມຄອງແລ້ວ.
- ເມື່ອທ່ານໄດ້ຮ້ອງຂໍເອົາການ ພິຈາລະນາຄະດີ ຄືນໃໝ່ແລ້ວ, ທ່ານຈະບໍ່ສາມາດຮ້ອງຂໍເອົາ ການພິຈາລະນາຄະດີເລື້ອງເກົ່າຊ້ຳອີກໄດ້ ເປັນເວລາຫົກ (6) ເດືອນ.
- ທ່ານສາມາດຄັດຄ້ານເລື້ອງການຈັດບ່ອນຢູ່ ຫລືສະພາບການກັກຂັງ ໄດ້ສະເໜີໂດຍການຍື່ນຂໍເອົາຄຳສັ່ງໃຫ້ສົ່ງໂຕຜູ້ຖືກກັກຂັງມາທີ່ສານ. ໜັງສື (ຄຳສັ່ງໃຫ້ສົ່ງໂຕຜູ້ຖືກກັກຂັງມາທີ່ສານ) ໝາຍເຖິງວ່າ ມີບຸກຄົນໃດນຶ່ງກຳລັງກັກຂັງທ່ານແລະທ່ານມີສິດທີ່ຈະຮູ້ເຫດຜົນ.

## ຂ້າພະເຈົ້າຈະອອກຈາກການຄຸ້ມຄອງໄດ້ຈັ່ງໃດ?

- ທ່ານສາມາດຮ້ອງຂໍເອົາ (ການພິຈາລະນາຄະດີ ຄືນໃໝ່) ເລື້ອງຖານະການເປັນຜູ້ຖືກຄຸ້ມຄອງຂອງທ່ານຍາມໃດກໍໄດ້ ຫລັງຈາກຜູ້ພິພາກສາ ໄດ້ແຕ່ງຕັ້ງຜູ້ຄຸ້ມຄອງແລ້ວ.
- ເມື່ອທ່ານໄດ້ຮ້ອງຂໍເອົາ (ການພິຈາລະນາຄະດີ ຄືນໃໝ່) ເລື້ອງຖານະການເປັນຜູ້ຖືກຄຸ້ມຄອງຂອງທ່ານແລ້ວ, ທ່ານຕ້ອງລໍຖ້າຫົກ (6) ເດືອນເພື່ອຮ້ອງຂໍເອົາການພິຈາລະນາຄະດີເລື້ອງດັ່ງກ່າວອີກ.
- ສະພາບການຄຸ້ມຄອງຂອງທ່ານຈະສິ້ນສຸດໂດຍອັດຕະໂນມັດຫລັງຈາກໜຶ່ງປີ, ເວັ້ນແຕ່ວ່າທາງຄາວຕີ້ຈະຊອກຫາທາງຈັດໃຫ້ມີການຄຸ້ມຄອງຄືນໃໝ່ອີກ.

## ຂ້າພະເຈົ້າຈະສາມາດຄັດຄ້ານການຈັດໃຫ້ມີການຄຸ້ມຄອງຄືນໃໝ່ໄດ້ຈັ່ງໃດ?

- ຄາວຕີ້ຕ້ອງແຈ້ງໃຫ້ທ່ານຊາບຢ່າງໜ້ອຍສາມສິບ (30) ວັນ ກ່ອນໜ້າທີ່ລະຍະເວລາໜຶ່ງປີຈະ ສິ້ນສຸດລົງ ຖ້າວ່າມັນມີແນວໂນ້ມວ່າຈະມີການ ຈັດການຄຸ້ມຄອງອີກ.
- ບໍ່ດັ່ງນັ້ນ, ສິດທິຂອງທ່ານທີ່ຈະຄັດຄ້ານເລື້ອງການຈັດການຄຸ້ມຄອງໃໝ່ ກໍຈະມີພື້ນຖານຄ້າຍຄືກັບສິດທິຂອງທ່ານທີ່ຖືກຈັດເຂົ້າໃນການຄຸ້ມຄອງແຕ່ເລີ້ມຕົ້ນ, ດັ່ງທີ່ເວົ້າໄວ້ຂ້າງເທິງນີ້.

---

**ຖ້າວ່າທ່ານມີຄຳຖາມໃດໆ ກ່ຽວກັບການຄຸ້ມຄອງ LPS, ຈົ່ງຕິດຕໍ່**
**ທະນາຍຄວາມທີ່ດູແລດ້ານສິດທິຂອງຄົນເຈັບປະຈຳຄາວຕີ້ (County Patients' Rights Advocate)**
**ຫລື**
**ທະນາຍຄວາມສາທາລະນະ**
**ຫລື**
**ບໍລິສັດ Protection & Advocacy, Inc.**
ນ້ຳເບີໂທຟຣີ: 1-800-776-5746

Publication #5225.12
Laotian
August 2001